## 10. ປ່າສະຫງວນແຫ່ງຊາດ ພູຫີນປູນ

### ຂໍ້ມູນທົ່ວໄປ

**ຊື່: ພູຫີນປູນ**

**ເນື້ອທີ່**

150,000 ຮຕ (ຕາມດຳລັດ 164)

202,911 ຮຕ (ຕາມ ກົມຄຸ້ມຄອງຊັບພະຍາກອນທຳປ່າໄມ້ ປີ 2013)

237,987 ຮຕ (ຕາມ ອີງການ IUCN, 2017)

**ວັນ,ເດືອນ,ປີ ທີ່ກຳນົດເປັນປ່າສະຫງວນແຫ່ງຊາດ**

29 ຕຸລາ 1993 ພາຍໃຕ້ ດຳລັດ 164/ນຍ.

**ຈຸດທີ່ຕັ້ງ**

ເສັ້ນຂະໜານ: $17^{o}26'$ - $18^{o}$ 10' N; ເສັ້ນແວງ: $104^{o}$ 24' - $105^{o}$ 11' E

**ແຂວງ**

ຄຳມ່ວນ

**ເມືອງ**

| | |
|---|---|
| ຍົມມະລາດ | 50,162 ຮຕ ກວມເອົາ 21 % [ຄຳມ່ວນ] |
| ຫີນບູນ | 77,568 ຮຕ ກວມເອົາ 33 % [ຄຳມ່ວນ] |
| ຖູນຄຳ | 44,677 ຮຕ ກວມເອົາ 19 % [ຄຳມ່ວນ] |
| ມະຫາໄຊ | 4,666 ຮຕ ກວມເອົາ 2 % [ຄຳມ່ວນ] |
| ນາກາຍ | 47,872 ຮຕ ກວມເອົາ 20 % [ຄຳມ່ວນ] |
| ທ່າແຂກ | 13,037 ຮຕ ກວມເອົາ 5 % [ຄຳມ່ວນ] |
| **ລວມ** | **237,982 ຮຕ** |

**ຂອບເຂດຊາຍແດນ**

ຢູ່ໃນດຳລັດ ເລກທີ 164, ຂອບເຂດຊາຍແດນແມ່ນເໜັ່ງໄປຕາມແມ່ນ້ຳຫີນບູນ ຢູ່ທາງທິດເໜືອ ແລະ ທິດຕາເວັນອອກສ່ຽງເໜືອ. ຈາກນັ້ນ ຂອບເຂດຊາຍແດນໂດຍສ່ວນໃຫຍ່ກໍເໜັ່ງໄປຕາມສັນພູຫີນປູນໃຫຍ່, ສາຍນ້ຳໂດນຢູ່ທາງທິດຕາເວັນຕົກສຽງໃຕ້, ແລ້ວໄປຕາມທາງຫລວງໝາຍເລກ 12 ກ່ອນຈະຮອດເມືອງຍົມມະລາດ. ຈາກນັ້ນ ກໍເໜັ່ງໄປຕາມຈຸດບ່ອນຫລຸມ ລະຫວ່າງພູພຽງນາກາຍ ກັບພູຫີນປູນ ໄປຫານ້ຳຫີນບູນ. ຂອບເຂດຊາຍແດນທີ່ຄຸ້ມຄອງໃນປະຈຸບັນ ແມ່ນແຕກຕ່າງຈາກ ຂອບເຂດທີ່ກຳນົດຢູ່ໃນດຳລັດ 164, ແລະ ລວມເອົາພື້ນທີ່ ທາງທິດເໜືອ ຂອງນ້ຳຫີນບູນເຂົ້າໃສ່ນຳ. ມັນຈຳເປັນຕ້ອງ

ໄດ້ຄັດຈ້ອນຄືນໃໝ່ ໂດຍພິຈາລະນາຕາມເນື້ອທີ່ເພີ່ມເຕີມ ບ່ອນທີ່ມີຄຸນຄ່າສູງດ້ານການອະນຸລັກ, ແລະ ລຶບພື້ນທີ່ ບ່ອນທີ່ມີຄຸນຄ່າຕໍ່າອອກ.

**ການເຂົ້າເຖິງ**

ເຂດປ່າສະຫງວນແຫ່ງຊາດພູຫີນປູນ ຕັ້ງຢູ່ຫ່າງຈາກ ເທດສະບານແຂວງຄື: ເມືອງທ່າແຂກ, ແຂວງຄໍາມ່ວນ ໄປທາງທິດຕາເວັນອອກສ່ຽງເໜືອ 18 ກມ, ລຽບຕາມທາງເລກ 12. ຄວາມຈິງແລ້ວ ທາງເລກ 12 ແມ່ນເສັ້ນເຂດແດນສ່ວນໜຶ່ງ ຢູ່ທາງທິດໃຕ້ ຂອງເຂດປ່າສະຫງວນ. ຢູ່ ກິໂລແມັດທີ 54 ລຽບຕາມທາງເລກ 12 ເສັ້ນທາງເຂົ້າອອກ ແມ່ນຢູ່ພື້ນທີ່ສ່ວນທີ່ຕັ້ງຢູ່ດ້ານ ທິດຕາເວັນອອກ ຂອງເຂດປ່າສະຫງວນ, ແລະ ຕັດຜ່ານ ແປດບ້ານ. ເສັ້ນທາງເຂົ້າອອກຫລັກບ່ອນທີ່ສອງ ແມ່ນຢູ່ ກິໂລແມັດ....ລຽບຕາມເສັ້ນທາງ 13 ຢູ່ໃກ້ກັບບ້ານໜອງບົວ ຊາຍແດນເບື້ອງທິດຕາເວັນຕົກສ່ຽງໃຕ້ຂອງປ່າສະຫງວນ. ເສັ້ນທາງນີ້ ເປັນທາງເຂົ້າອອກບ້ານຕ່າງໆ 14 ບ້ານ ຊຶ່ງເຂົ້າໃນພື້ນທີ່ປ່າສະຫງວນ ຢູ່ທາງທິດຕາເວັນຕົກ ເຂດບ້ານນາຫີນ. ທາງເຂົ້າອອກບ່ອນນີ້ ແລ່ນຜ່ານບ້ານກັນຊຸ່ມ ຫ້າບ້ານ ແລະ 10 ບ້ານທີ່ຢູ່ໃນເຂດປ່າສະຫງວນ ຊຶ່ງມີເສັ້ນທາງໄປສິ້ນສຸດຢູ່ຖໍ້າກອງລໍ່. ຈໍານວນເສັ້ນທາງເຂົ້າອອກບ່ອນອື່ນໆ ແມ່ນແລ່ນລຽບໄປຕາມ ຊາຍແດນຂອງເຂດປ່າສະຫງວນ ພ້ອມທັງເປັນເສັ້ນທາງເຂົ້າອອກຂອງ ບັນດາບ້ານທີ່ຢູ່ຫ່າງໄກສອກຫລີກ.

**ແຜນທີ່**

ມາດຕາສ່ວນ I: 50,000

| | | | |
|---|---|---|---|
| 5845-2 | 5945-3 | 5945-2 | |
| 5844-1 | 5944-4 | 5944-1 | |
| | 5944-3 | 5944-2 | 6044-3 |
| | | 5943-1 | 6043-4 |

ມາດຕາສ່ວນ II: 100,000

| | | |
|---|---|---|
| E-48-65 | E-48-66 | |
| E-48-77 | E-48-78 | |
| | E-48-90 | E-48-91 |

## ປະຫວັດຄວາມເປັນມາໂດຍຫຍໍ້

| | |
|---|---|
| **1993** | ໄດ້ປະກາດເປັນປ່າສະຫງວນໃນເດືອນ ຕຸລາ |
| **1995-2000** | ໄດ້ປະຕິບດໂຄງແຜນງານປ່າສະຫງວນຍ່ອຍ FOMACOP NBCA |
| **1999** | ການປ່ຽນຊື່ຢ່າງເປັນທາງການ ຈາກຊື່ "ພູຫີນປູນແຂວງຄໍາມ່ວນ" ມາເປັນ "ພູຫີນປູນ" |
| **1999** | ໄດ້ສ້າງແຜນຄຸ້ມຄອງຈັດສັນ ສໍາລັບ ປ່າສະຫງວນແຫ່ງຊາດພູຫີນປູນ |
| **2011-2013** | ໄລຍະ 1: ໂຄງການໄລຍະ ສອງປີເຄິ່ງ ຮ່ວມກັນລະຫວ່າງ FFI & IUCN, "ການປົກປ້ອງປະຊາກອນທະນິທີ່ມີຄວາມສໍາຄັນລະດັບໂລກ ຢູ່ເຂດອະນຸລັກທໍາມະຊາດ ອ້າຍລາວຫານ/ Ailaoshan, ແຂວງ ຢຸນນານ ແລະ ປ່າສະຫງວນແຫ່ງຊາດ ພູຫີນປູນ ຢູ່ ສປປ ລາວ" ໂດຍມູນນິທິ ອາກັດສ໌(ARCUS) |

| | |
|---|---|
| **2014-2017** | ໄລຍະ 2: ໂຄງການໄລຍະສາມປີ ໂດຍອົງການ IUCN , ຊື່ໂຄງການ " ປົກປັກຮັກສາ ທະນີແກ້ມຂາວເຂດໃຕ້ ຢູ່ເຂດປ່າສະຫງວນແຫ່ງຊາດ ພູຫີນປູນ, ສປປ ລາວ." ສະໜອງທຶນ ໂດຍມູນນິທິອາກັດສ໌(ARCUS) |

## ການຄຸ້ມຄອງໃນປະຈຸບັນ

### ການປະກອບພະນັກງານ

ພະນັກງານທັງໝົດ 24 ຄົນ, ມີພະນັກງານຈາກກະສິກຳແຂວງ ຫົກຄົນ ແລະ ຈາກກະສິກຳເມືອງ 18 ຄົນ ມາແຕ່ເມືອງ ຫີນບູນ(6), ທ່າແຂກ (6), ແລະ ຍົມມະລາດ (6). ປະຈຸບັນພວມມີການປຶກປືກສາຫາລື ຮ່ວມກັບ ເມືອງນາກາຍ ກ່ຽວກັບການສະໜອງພະນັກງານເພີ່ມ.

### ກິງຈັກການຄຸ້ມຄອງບໍລິຫານ

ຫົວໜ້າຫ້ອງການຄຸ້ມຄອງປ່າສະຫງວນ ປະຈຳການຢູ່ທີ່ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ໃນຂະນະທີ່ ຮອງຫົວໜ້າແມ່ນ ພະນັກງານຂອງ ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ. ພະນັກງານຂອງປ່າສະຫງວນ ຢູ່ຫ້ອງການ ກະສິກຳ ແລະປ່າໄມ້ເມືອງ ແຕ່ລະເມືອງ ຈະຖືກຈັດຕັ້ງເປັນແຕ່ລະໜ່ວຍງານ ຕາມໜ້າວຽກດ້ານການຄຸ້ມຄອງ.

### ຕຶກອາຄານ

ສຳນັກງານໃຫຍ່ ຂອງປ່າສະຫງວນແຫ່ງຊາດ ປະຈຸບັນແມ່ນຕັ້ງຢູ່ເມືອງ ທ່າແຂກ ໂດຍມີສະຖານີຍ່ອຍພາກສະໜາມສາມແຫ່ງ ຕັ້ງຢູ່ເມືອງທ່າແຂກ, ເມືອງ ຍົມມະລາດ ແລະ ເມືອງ ຫີນບູນ.

### ການສະໜັບສະໜູນດ້ານການເງິນ ແລະ ການຝຶກອົບຮົມ

ປ່າສະຫງວນ ບໍ່ໄດ້ຮັບການສະໜັບສະໜູນທຶນແຕ່ຢ່າງໃດ ຈາກກອງທຶນພັດທະນາປ່າໄມ້, ສຳລັບໄລຍະແຕ່ປີ 2015-2017 ສາລັບເງິນທີ່ເປັນຄ່າໃຊ້ຈ່າຍພາກສະໜາມ. ອົງການ IUCN ໄດ້ເຄື່ອນໄຫວວຽກຢູ່ສາມເມືອງ ເຊັ່ນ: ເມືອງ ຫີນບູນ, ເມືອງ ຄູນຄຳ ແລະ ເມືອງ ນາກາຍ ໂດຍໄດ້ຮັບການສະໜັບສະໜູນຈາກ ມູນນິທິ ອາກັດສ໌(Arcus Foundation) ແຕ່ປີ 2011 – 2013, ແລະ ແຕ່ປີ 2014 – 2017.

### ບຸລິມະສິດ ການຄຸ້ມຄອງໃນປະຈຸບັນ

- ການຄຸ້ມຄອງທີ່ມີການປະສານສົມທົບກັນກັບ ຊາວບ້ານ
- ການປັກຫລັກໝາຍຂອບເຂດ ປ່າສະຫງວນແຫ່ງຊາດ
- ການວາງແຜນນຳໃຊ້ທີ່ດິນບ້ານ, ເຊື່ອມເຂົ້າກັນກັບ ການແບ່ງເຂດນຳໃຊ້ ຂອງ ເຂດຄຸ້ມຄອງການນຳໃຊ້ ແລະ ເຂດຫວງຫ້າມເດັດຂາດ
- ປັບປຸງຂໍ້ມູນກ່ຽວກັບຊັບພະຍາກອນທຳມະຊາດ
- ການເກັບກຳຂໍ້ມູນຂອງບ້ານ
- ການພັດທະນາຊີວິດການເປັນຢູ່ ທີ່ເຊື່ອມໂຍງກັບ ການຫລຸດຜ່ອນ ໄພຂົ່ມຂູ່

- ບັນດາກິດຈະກຳ ດ້ານການປູກຈິດສຳນຶກເພື່ອການອະນຸລັກ ແລະ ການໂຄສະນາເຜີຍແຜ່, ລວມທັງການສຳຫລວດ ຕະຫລາດ
- ການຕິດຕາມກວດກາ ແລະ ການກວດກາລາດຕະເວນ ເພື່ອບັງຄັບໃຊ້ກົດໝາຍ
- ການປະເມີນຄຸນຄ່າດ້ານການທ່ອງທ່ຽວ, ລວມທັງ ບັນດາຖ້ຳ, ຈຸດຊົມວິວ ແລະ ຄຸນຄ່າດ້ານຊີວະນາໆພັນຕາມພູຫີນປູນ

**ຫົວຂໍ້ການຄົ້ນຄວ້າທີ່ມີຄວາມເປັນໄປໄດ້**

- ຄວາມໜາແໜ້ນ ຂອງປະຊາກອນ ທະນີແກ້ມຂາວ ຢູ່ເຂດຫວງຫ້າມເດັດຂາດ ຂອງ ພູຫີນປູນ
- ຄວາມໜາແໜ້ນ ຂອງປະຊາກອນ ຄ່າງລາວ ຢູ່ເຂດຫວງຫ້າມເດັດຂາດ ຂອງ ພູຫີນປູນ
- ການແຕ້ມແຜນທີ່ ຂອບເຂດການເຄື່ອນໄຫວ ແລະ ເຂດຫົວລ້ຽວຫົວຕໍ ຂອງຄ່າງລາວ, ຄ່າງດຳ ແລະ ຄ່າງຫາງຕິ່ງ ໂດຍມີການສຶກສາຄົ້ນຄວ້າ ກ່ຽວກັບວິວັດທະນາການ ຂອງປະຊາກອນສັດຊະນິດຕ່າງໆ ຢູ່ເຂດພູຫີນປູນ

**ໂຄງການອື່ນໆທີ່ເຄື່ອນໄຫວ ຢູ່ໃນເຂດປ່າສະຫງວນ**

- ການພັດທະນາການທ່ອງທ່ຽວ (Tetraktys, Konglor & Natan)
- ໂຄງການ ອະນຸລັກທະນີແກ້ມຂາວຖິ່ນໃຕ້ ຂອງອົງການ IUCN ຢູ່ຫີນບູນ, ຄາຄູນ ແລະ ນາກາຍ

## ສະພາບແວດລ້ອມ ດ້ານຊີວະ-ກາຍະພາບ

**ລັກສະນະທາງພູມສັນຖານ**

ສ່ວນໃຫຍ່ຈະເປັນສາຍພູຫີນປູນ ທີ່ມີຄວາມສູງຊັນ, ໜ້າຜາຊັນ ແລະ ຕາລິ່ງຊັນ/ bluffs ແລະ ຖ້ຳຕ່າງໆ ຢູ່ຫລາຍພື້ນທີ່, ມີຄວາມສູງເຖິງ 1,500 ແມັດ ຢູ່ໃກ້ກັບພູມອນ. ຮ່ອມພູທີ່ພື້ນຮາບພຽງ ຫລືເອີ້ນກັນວ່າ ກວນ ຊຶ່ງມີຂະໜາດຕັ້ງແຕ່ ຫລັກຮ້ອຍເຮັກຕາ ໄປຈົນຮອດ 40 ກິໂລຕາແມັດ. ແມ່ນ້ຳໃຫຍ່ທີ່ສຳຄັນ ລວມມີນ້ຳຫີນບູນ ຢູ່ດ້ານທິດເໜືອ ແລະທິດຕາເວັນຕົກ, ແລະ ນ້ຳປາເຕັ້ນ, ນ້ຳປະກັນ ແລະ ນ້ຳໂດນ ຢູ່ດ້ານທິດຕາເວັນຕົກ ແລະ ທິດໃຕ້. ແມ່ນ້ຳຫລາຍສາຍໃນຈຳນວນນີ້ແມ່ນໄຫລທະລຸຜ່ານ ຖ້ຳໃຕ້ດິນ, ສ່ວນໃຫຍ່ ແມ່ນລະຫວ່າງ ຖ້ຳກອງລໍ່ ກັບນາຕານ ຕາມສາຍນ້ຳຫີນບູນ ແລະ ສາມາດຂີ່ເຮືອໄປໄດ້.

**ລະດັບຄວາມສູງ**

ສູງຕັ້ງແຕ່ 180 ແມັດ ຈົນເຖິງ 1,465 ແມັດ. ພູຽກ (1,465 ແມັດ) ຊຶ່ງຕັ້ງຢູ່ທາງທິດຕາເວັນຕົກສ່ຽງເໜືອ ສຸດຂອງປ່າສະຫງວນ ແມ່ນຈອມພູຫີນປູນບ່ອນສູງທີ່ສຸດ. ພູຫີນປູນທັງໝົດມີຄວາມສູງແຕ່ 650 ແມັດ ຈົນເຖິງ 820 ແມັດ.

**ສະພາບອາກາດ**

ປ່າສະຫງວນແຫ່ງຊາດພູຫີນປູນ ຕັ້ງຢູ່ເຂດອາກາດລົມມໍລະສຸມອາຊີຕາເວັນອອກສ່ຽງໃຕ້. ໃນຊ່ວງລະດູຝົນ(ພະຈິກ - ກຸມພາ), ຈະມີລົມພັດມາຈາກທາງທິດຕາເວັນອອກສ່ຽງເໜືອ ໄປທີ່ວອາຊີຕາເວັນອອກສ່ຽງໃຕ້. ນີ້ແມ່ນລົມມໍລະສຸມຕາເວັນອອກສ່ຽງເໜືອ, ມີລັກສະນະອາກາດແຫ້ງ ໜາວເຢັນ ແລະ ມີຝົນຝອຍ. ສຳລັບລະດູຮ້ອນ (ພຶດສະພາ-ສິງຫາ), ຈະມີລົມອຸ່ນພັດມາຈາກດ້ານທິດຕາເວັນຕົກສ່ຽງໃຕ້ ນຳເອົາຄວາມຊຸ່ມຊື່ນຈາກທະເລອັນດາມັນ ແລະ ອ່າວໄທເຂົ້າມາສູ່ບາງ

ສ່ວນ ຂອງ ບ່ອນຮັບນໍ້າ ຢູ່ສປປ ລາວ. ນີ້ແມ່ນ ລົມມໍລະສຸມຕາເວັນຕົກສ່ຽງໃຕ້. ອາກາດອົບອຸ່ນ, ແລະ ມີຄວາມຊຸມຊື່ນສູງ.

**ປ່າໄມ້ປະເພດຕົ້ນຕໍ**

ປ່າເຄິ່ງດົງດິບ, ປ່າໄມ້ປ່ອງ ແລະ ເຄືອໄມ້, ປ່າປະສົມ, ປ່າໂຄງ. ພືດຢູ່ ກອນຂະໜາດໃຫຍ່ ມີການປົບຕົວ ແລະ ສ່ວນໃຫຍ່ແມ່ນຊະນິດພັນລະດັບສອງ.

***ການປົກຫຸ້ມປ່າໄມ້***

ການຄິດໄລ່ນີ້ ແມ່ນດຳເນີນການໂດຍໂຄງການຕິດຕາມກວດກາ ພື້ນທີ່ປົກຫຸ້ມປ່າໄມ້((FCMP) MRZ/GTZ). ໂດຍອີງໃສ່ການແປ ຂອງປີ 1996/97 ຂອງດາວທຽມ ແລນແຊດ ທີເອັມ ໂດຍມີຂອບເຂດປ່າສະຫງວນແຫ່ງຊາດ ຕາມທີ່ສະແດງໃຫ້ເຫັນຢູ່ແຜນທີ່ພູມສັນຖານ ມາດຕາສ່ວນ 1:100.000 ທີ່ສະໜອງໃຫ້ໂດຍ ໂຄງການໂຟມາຄອບ (FOMACOP). ຍັງບໍ່ທັນໄດ້ມີການກວດກາທຽບໃສ່ ເອກະສານເດີມ. ດັ່ງນັ້ນ, ຂໍ້ມູນຈຶ່ງອາດຈະເປັນການຄາດກະ.

| ລະຫັດປ່າໄມ້ | ເນື້ອທີ່/ຮຕ | % ເນື້ອທີ່ທັງໝົດ |
|---|---|---|
| ປ່າດົງດິບ/ປ່າປະສົມ, ການປົກຫຸ້ມຕໍ່ເນື່ອງ, ການປົກຫຸ້ມທີ່ມີຄວາມໜາແໜ້ນສູງ (11, 17) | 3,019 | 1.6 |
| ປ່າດົງດິບ/ປ່າປະສົມ, ການປົກຫຸ້ມຕໍ່ເນື່ອງ, ການປົກຫຸ້ມທີ່ມີຄວາມໜາ ແໜ້ນປານກາງ(12, 18) | 19,354 | 10.7 |
| ປ່າດົງດິບ/ປະສົມ,ປ່າຫ່າງ(13, 19) | 886 | 0.4 |
| ປ່າຫລົ່ນໃບປົກຫຸ້ມທົ່ວພື້ນທີ່ (20) | 3,123 | 1.6 |
| ປ່າຫລົ່ນໃບຫ່າງ (22) | 116 | 0.6 |
| ປ່າດົງດິບ ແລະ ທີ່ດິນປ່າຕໍາ່ (61, 63, 65) | 55,983 | 31.1 |
| ທີ່ດິນປ່າໂຄກ ແລະປ່າຕໍາ່ (64) | 440 | 0.2 |
| ຫີນ | 93,250 | 51.7 |
| ເຂດການຜະລິດກະສິກຳ (81, 82) | 350 | 0.1 |
| ທີ່ດິນກະສິກຳ (91) | 3,628 | 2.0 |
| ລວມທັງໝົດ | 180,149 | 100.0 |

**ລັກສະນະດ້ານຖິ່ນທີ່ຢູ່ອາໄສອື່ນໆ**

ພື້ນທີ່ເຄິ່ງປົກຫ້ມທີ່ໜາແໜ້ນ ແລະ ພູຫີນປູນປອກໂຫລ້ນ;ມີຖໍ້າໜາແໜ້ນ; ເຂດດິນທາມທີ່ມີຈໍາກັດ, ລວມທັງ ມີໜອງຫລາຍໜອງ. ການເຊື່ອມໂຍງຂອງຖິ່ນທີ່ຢູ່ອາໄສ ເຂົ້າກັບພູພຽງນາກາຍ ແລະ ເຂດປ່າສະຫງວນແຫ່ງຊາດ ນໍາ້ກະດິງ.

**ສັດປ່າຊະນິດສໍາຄັນ**

ບັນຊີຊະນິດພັນສັດປ່າ ຕໍ່ໄປນີ້ ແມ່ນໄດ້ເກັບກໍາຜ່ານການສໍາຫລວດແບບເຂັ້ມຂຸ້ນ ສີ່ຄັ້ງ, ຊຶ່ງປະຕິບັດໃນປີ 1997 ແລະ 1998. ຜົນໄດ້ຮັບຂອງ ການສາຫລວດເຫລົ່ານີ້ ແມ່ນໄດ້ພັນລະນາໄວ້ໃນບົດລາຍງານຕ່າງໆດັ່ງນີ້: "*ບົດບັນທຶກ ກ່ຽວກັບສັດປ່າ ແລະ ຖິ່ນທີ່ຢູ່ອາໄສ ຢູ່ເຂດປ່າສະຫງວນແຫ່ງຊາດພູຫີນປູນ ແຂວງຄໍາມ່ວນ, ສປປ ລາວ*" ຂຽນໂດຍ ຕິມມິນສ໌/ Timmins (1997) "*ການສໍາຫລວດຖິ່ນທີ່ຢູ່ອາໄສ ແລະ ສັດລ້ຽງລູກດ້ວຍນົມ ຢູ່ພາຍໃນ ແລະ ບໍລິເວນ ປ່າສະຫງວນ*

*ແຫ່ງຊາດ ພູຫີນປູນ ແຂວ ຄຳມ່ວນ, ສປປ ລາວ*” ຂຽນໂດຍ ສະເຕນເມັດສ໌/ Steinmetz (1998); ແລະ *“ບົດລາຍງານກ່ຽວກັບການສຳຫລວດເຈຍ ຢູ່ເຂດປ່າສະຫງວນແຫ່ງຊາດພູຫີນປູນ ແຂວງ ຄຳມ່ວນ” ຂຽນໂດຍ ຟຣານຊິດສ໌ ແລະ ວົງຄຳແຫງ (1998); ແລະ “ການສຳຫລວດສັດເຄິ່ງບົກເຄິ່ງນ້ຳ ແລະ ສັດເລືອຄານ ຢູ່ເຂດປ່າສະຫງວນແຫ່ງຊາດ ພູຫີນປູນ ແຂວງ ຄຳມ່ວນ” ຂຽນໂດຍ ສະຈວດ/* Stuart (1998). ໄດ້ມີການຄົ້ນຄວ້າຊີວະນາໆພັນ ໂດຍອີງການ ໄອຢູຊີເອັນ/ IUCN ໃນປີ 2016. ດັ່ງນັ້ນ, ຈິ່ງຄວນຮັບຮູ້ວ່າ ສັດລ້ຽງລູກຂະໜາດໃຫຍ່ ແລະ ຊະນິດພັນທີ່ມີຄຸນຄ່າສູງອື່ນໆ (ເຊັ່ນ: ເຍືອງ) ອາດມີຈຳນວນຫລຸດລົງ ຫລື ເຖິງຂັ້ນສູນພັນ ພາຍໃນເຂດປ່າສະຫງວນ ໃນຊຸມປີຜ່ານມາ, ໂດຍສະເພາະ ຊະນິດພັນທີ່ຢູ່ໃນເປົ້າໝາຍຂອງການຄ້າຂາຍສັດປ່າ.

**ສັດລ້ຽງລູກດ້ວຍນົມຊະນິດພັນ ທີ່ໄດ້ຮັບຄວາມສົນໃຈໃນການອະນຸລັກ ຢູ່ເຂດປ່າສະຫງວນແຫ່ງຊາດພູຫີນປູນ**

| ຊື່ທ້ອງຖິ່ນ | ຊື່ທົ່ວໄປເປັນພາສາອັງກິດ | ຊື່ວິທະຍາສາດ | ຄວາມສຳຄັນລະດັບຊາດ | ປະເພດຄວາມສ່ຽງ ໃນ ລະດັບສາກົນ | ສະຖານະພາບຄວາມສ່ຽງພາຍໃນປະເທດ |
|---|---|---|---|---|---|
| ລິ່ນຄວາຍ | Sunda Pangolin | *Manis javanica* | | CR | |
| ລີງລົມ | Slow Loris | *Nycticebus bengalensis* | - | - | - |
| ລີງກັງ | Pig-tailed Macaque | *Macaca leonine* | - | VU | PARL |
| ລີງຜົມແບ່ງ(ລີງອາຊາມ) | Assamese Macaque | *Macaca assamensis* | - | VU | PARL |
| | Stump-tailed Macaque | *Macaca arctoides* | | VU | |
| ຄ່າງລາວ | Lao Langur | *Trachypithecus laotum* | | VU | |
| ຄ່າງຫາຕິ່ງ | Hatinh Langur | *Trachypithecus hatinhensis* | - | VU | PARL |
| ທະນີແກ້ມຂາວຖິ່ນໃຕ້ | Southern White-cheeked Gibbon | *Nomascus siki* | HNP | DD | PARL |
| ບ່າງລິ້ວ | Black Giant Squirrel | *Ratufa bicolor* | - | 0 | PARL |
| ບ່າງສີຂີ້ເຖົ່າ | Hairy-footed Flying Squirrel | *Trogopterus pearsonii* | - | GNT | LKL |
| ບາງແກ້ມແດງ | Red-cheeked Flying Squirrel | *Hylopetes spadiceus* | - | 0 | LKL |
| ບ່າງລິ້ວແກ້ມຂາວ | Phayre’s Flying Squirrel | *Hylopetes phayrei* | - | 0 | LKL |
| ເໝັ້ນ | East Asian Porcupine | *Hystrix brachyura* | | LC | 0 |
| ຂະຍຸ | Rock rat/Kha Nyou | *Laonastes aenigmamus* | HNP | LC | PARL |
| ໝີ | Asiatic Black Bear | *Ursus thibetnanus* | - | VU | - |
| ເໝີຍ | Malayan Sun Bear | *Helarctos malayanus* | | VU | |
| ໝູລຶງ | Hog Badger | *Arctonyx collaris* | | VU | |
| ເຫງັນໝີຂໍ | Binturong | *Arctictis binturong* | | VU | |
| ເສືອດາວລາຍເມກ | Clouded Leopard | *Neofelis nebulosa* | - | - | - |
| ເສືອລາຍຫີນອ່ອນ | Marbled Cat | *Pardofelis marmorata* | | NT | |

| | | | | | |
|---|---|---|---|---|---|
| ຊ້າງ | Asian Elephant | *Elephas maximus* | HNP | EN | ARL |
| ກວາງ | Sambar | *Rusa unicolor* | - | 0 | PARL |
| ເມີຍ/ກະທິງ | Gaur | *Bos gaurus* | HNP | VU | ARL |
| ເຍືອງ | Chinese Serow | *Capricornis milneedwardsii* | - | VU | PARL |

**ປະເພດນົກ ທີ່ໄດ້ຮັບຄວາມສົນໃຈໃນການອະນຸລັກ ຢູ່ເຂດປ່າສະຫງວນແຫ່ງຊາດ ພູຫີນປູນ**

| **ຊື່ທ້ອງຖິ່ນ** | **ຊື່ທົ່ວໄປເປັນພາສາອັງກິດ** | **ຊື່ວິທະຍາສາດ** | **ຄວາມສຳຄັນລະດັບຊາດ** | **ປະເພດຄວາມສ່ຽງໃນ ລະດັບສາກົນ** | **ສະຖານະພາບຄວາມສ່ຽງພາຍໃນປະເທດ** |
|---|---|---|---|---|---|
| ນົກໃສ່ | Red-collared Woodpecker | *Picus rabieri* | - | VU | 0 |
| ນົກກົກຄໍເອີ້ມ | Wreathed Hornbill | *Aceros undulatus* | - | 0 | ARL |
| ນົກກົກຄໍຄໍາ | Great Hornbill | *Buceros bicornis* | | NT | |
| ນົກກິນແມງໄມ້ຫົວສີຄໍ້າ | Sooty Babbler | *Stachyris herberti* | - | VU | o |

ສັດເລືອຄານມີທັງໝົດ 18 ຊະນິດ, ສັດເຄິ່ງບົກເຄິ່ງນໍ້າ 47 ຊະນິດ ແລະ ປາ 145 ຊະນິດ ທີ່ໄດ້ມີການຈົດບັນທຶກຢູ່ໃນເຂດປ່າສະຫງວນ.

**ການຈັດປະເພດຄວາມສຳຄັນ**

| |
|---|
| ປະເພດຄວາມສຳຄັນລະດັບຊາດ<br>**ANP**: ສຳຄັນລະດັບຊາດ; **HNP**: ສຳຄັນລະດັບສູງ; **INP**: ສຳຄັນລະດັບປານກາງ |
| ປະເພດຄວາມສຳຄັນລະດັບສາກົນ<br>**o**: ບໍ່ໄດ້ຢູ່ໃນບັນຊີ ທີ່ໜ້າເປັນຫ່ວງ; **DD**: ຂາດຂໍ້ມູນ; **GNT**:ໃກ້ທີ່ຈະສູນພັນໃນລະດັບໂລກ; **GT-CR:** ໃກ້ທີ່ຈະສູນພັນ ລະດັບໂລກເຖິງຂັ້ນວິກິດ; **GT-EN**: ໃກ້ແລະສ່ຽງທີ່ຈະສູນພັນໃນລະດັບໂລກ **GT-VU**: ໃກ້ທີ່ຈະສູນພັນ ໃນລະດັບໂລກ-ມີຄວາມບອບບາງ; **n/a**: ບໍ່ໄດ້ຈັດລຽງ. |
| ***ສະຖານະພາບຄວາມສ່ຽງໄພໃນລາວ***<br>**o**: ບໍ່ມີຄວາມສ່ຽງໄພໃນລາວ; **ARL**: ສ່ຽງໄພໃນລາວ; **CARL**: ບາງເງື່ອນໄຂມີຄວາມສ່ຽງໄພໃນລາວ ; **LKL**: ຮູ້ບໍ່ໄດ້ລະອຽດໃນລາວ; **n/a**: ບໍ່ໄດ້ຈັດລຽງ; **PARL**: ມີຄວາມເປັນໄປໄດ້ຕໍ່ຄວາມສ່ຽງໄພໃນລາວ. |

(Duckworth *et al.*, 1999)

## ໄພຂົ່ມຂູ່ຕົ້ນຕໍ

ບັນດາໄພຂົ່ມຂູ່ຕົ້ນຕໍປະກອບດ້ວຍ:

- ການລັກຕັດໄມ້ຢູ່ເຂດປ່າແກ່ທີ່ຍັງເຫລືອ ຕິດແປະກັບ ເຂດປ່າສະຫງວນ
- ການຂຸດຄົ້ນຫີນຜາ

- ການຂຸດຄົ້ນແຮ່ທອງ ແລະ ແຮ່ຄໍາ ຢູ່ເມືອງຫີນບູນ
- ການຂຸດຄົ້ນແຮ່ສັກກະສີ ຢູ່ເມືອງຫີນບູນ
- ການບຸກເບີກພື້ນທີ່ປ່າໄມ້ ແລະ ການຂະຫຍາຍພື້ນທີ່ ລວມເຖິງທີ່ດິນກະສິກໍາ
- ຜົນກະທົບຈາກການພັດທະນາເຂື່ອນໄຟຟ້ານໍ້າຕົກ ຢູ່ຕາມແມ່ນໍ້າຫີນບູນ ແລະ ການຫລຸດລົງຂອງເສັ້ນທາງທຽວຂອງຊ້າງ
- ການກໍ່ສ້າງເສັ້ນທາງໃໝ່ ທີ່ສະເໜີຢູ່ເມືອງນາກາຍ
- ການເພີ່ມຂຶ້ນຂອງປະຊາກອນໃນບ້ານ ແລະ ການນໍາໃຊ້ຊັບພະຍາກອນ
- ການລ່າສັດ
- ການຄ້າຂາຍສັດປ່າ
- ໄຟໃໝ້ປ່າ
- ຂອບເຂດຊາຍແດນທີ່ຍັງບໍ່ມີຄວາມແນ່ນອນ

## ສະພາບເສດຖະກິດ-ສັງຄົມ

### ປະຊາຊົນ ແລະ ບ້ານທີ່ກ່ຽວຂ້ອງ

ໄດ້ກໍານົດເອົາສາມບ້ານ ເປັນບ້ານຄູ່ຮ່ວມງານບຸລິມະສິດ ໂດຍຕິດພັນກັບ ຈຸດທີ່ຕັ້ງ ຂອງຮູບແບບການນໍາໃຊ້ຊັບພະຍາກອນຂອງບ້ານ:

I ບັນດາບ້ານທີ່ຕັ້ງຢູ່ພາຍໃນເຂດປ່າສະຫງວນແຫ່ງຊາດພູຫີນບູນ

II ບັນດາບ້ານທີ່ຕັ້ງຢູ່ນອກເຂດປ່າສະຫງວນແຫ່ງຊາດພູຫີນບູນ ໂດຍມີການນໍາໃຊ້ທີ່ດິນກະສິກໍາແລະຊັບພະຍາກອນອື່ນໆ ຢູ່ພາຍໃນເຂດປ່າສະຫງວນ

III ບັນດາບ້ານທີ່ຕັ້ງຢູ່ນອກເຂດປ່າສະຫງວນແຫ່ງຊາດພູຫີນບູນ ທີ່ມີເຂດແດນຕິດຈອດກັບເຂດແດນຂອງປ່າສະຫງວນ ແລະ ມີການນໍາໃຊ້ຊັບພະຍາກອນ ນອກເໜືອຈາກການນໍາໃຊ້ທີ່ດິນ ຢູ່ພາຍໃນເຂດປ່າສະຫງວນ.

**ຂໍ້ມູນປະຊາກອນ ທີ່ທີມງານຂອງໂຄງການເລນ 2 ໄດ້ເກັບກໍາ ໃນຊ່ວງປີ 2018 ໂດຍການປຶກສາຫາລືຮ່ວມກັບ ອົງການປົກຄອງຂັ້ນເມືອງ ແລະ ຂັ້ນແຂວງທີ່ກ່ຽວຂ້ອງ.**

| ເມືອງ | ຈໍານວນບ້ານ | ຈໍານວນບ້ານ ແຕ່ລະປະເພດ | | | ປະຊາກອນ |
|---|---|---|---|---|---|
| | | I | II | III | |
| ຍົມມະລາດ | 16 | 5 | 11 | 0 | 12,733 |
| ຫີນບູນ | 32 | 22 | 7 | 3 | 17,267 |
| ຄູນຄໍາ | 21 | 20 | 2 | 0 | 14,681 |
| ມະຫາໄຊ | 11 | 0 | 11 | 0 | 7,540 |
| ນາກາຍ | 8 | 0 | 7 | 1 | 7,827 |
| ທ່າແຂກ | 11 | 4 | 4 | 3 | 6,795 |
| ລວມທັງໝົດ | **99** | **51** | **42** | **7** | **66,843** |

**ສະຖິຕິປະຊາກອນແລະຊົນເຜົ່າ ຂອງ 23 ບ້ານທີ່ເປັນຜູ້ຮັກສາປ່າສະຫງວນແຫ່ງຊາດພູຫີນບູນ ຢູ່ເມືອງຫີນບູນ, ແຂວງ ຄໍາມ່ວນ.**

| ລດ | ຊື່ບ້ານ | ກຸ່ມບ້ານ | ຊົນເຜົ່າ | ຈຳນວນ ຫລັງຄາ ເຮືອນ | ຈຳນວນຄົນ | ຈຸດທີ່ຕັ້ງ |
|---|---|---|---|---|---|---|
| 1 | ນາໂພ | ນາໂພ | ກະເລີງ | 229 | 1525 | ຢູ່ນອກ |
| 2 | ທ່າໝີ | ນາໂພ | ຜູ້ໄທນ້ອຍ | 188 | 1050 | ທັບຊ້ອນ |
| 3 | ນາຄື | ນາໂພ | ຜູ້ໄທນ້ອຍ | 161 | 960 | ທັບຊ້ອນ |
| 4 | ນາຮ້າງ | ນາໂນ | ກະເລີງ | 79 | 492 | ທັບຊ້ອນ |
| 5 | ບຶງ | ນາໂນ | ກະເລີງ | 145 | 812 | ຢູ່ໃນ |
| 6 | ນາເຕີຍ | ນາໂນ | ກະເລີງ | 30 | 186 | ທັບຊ້ອນ |
| 7 | ໜອງດົງ | ນາໂນ | ກະເລີງ | 68 | 419 | ທັບຊ້ອນ<br>ທັບຊ້ອນ |
| 8 | ນາໂນ | ນາໂນ | ກະເລີງ | 52 | 330 | ຢູ່ນອກ |
| 9 | ນາທານ | ນາໂນ | ກະເລີງ | 44 | 266 | ທັບຊ້ອນ |
| 10 | ອິນແປງ | ຫີອນາ | ກະເລີງ | 44 | 218 | ຢູ່ໃນ |
| 11 | ນາເມືອງ | ຫີອນາ | ກະເລີງ | 35 | 323 | ຢູ່ໃນ |
| 12 | ນາອັ້ນ | ຫີອນາ | ກະເລີງ | 57 | 378 | ຢູ່ໃນ |
| 13 | ຫ້ວຍຊາຍ | ຫີອນາ | ກະເລີງ | 35 | 232 | ຢູ່ໃນ |
| 14 | ນາຮີ | ຫີອນາ | ກະເລີງ | 64 | 406 | ຢູ່ໃນ |
| 15 | ກອນກະຈາ | ຫີອນາ | ກະເລີງ | 68 | 526 | ຢູ່ໃນ |
| 16 | ຫີອນາ | ຫີອນາ | ກະເລີງ | 122 | 756 | ຢູ່ໃນ |
| 17 | ບອມລູ | ຫີອນາ | ກະເລີງ | 68 | 431 | ຢູ່ໃນ |
| 18 | ໂພນຕື້ອ | ບໍ່ໂພນຕື້ອ | ກະເລີງ | 98 | 480 | ຢູ່ໃນ |
| 19 | ນາໂດນ | ບໍ່ໂພນຕື້ອ | ກະເລີງ | 76 | 401 | ຢູ່ໃນ |
| 20 | ມ່ວງໄຂ່ | ບໍ່ໂພນຕື້ອ | ກະເລີງ | 232 | 665 | ຢູ່ໃນ |
| 21 | ນ້ອຍ | ບໍ່ໂພນຕື້ອ | ກະເລີງ | 126 | 665 | ຢູ່ໃນ |
| 22 | ນາຄຳບໍ່ | ບໍ່ໂພນຕື້ອ | ກະເລີງ | 68 | 405 | ຢູ່ໃນ |
| 23 | ທ່າຍົ້ | ບໍ່ໂພນຕື້ອ | ກະເລີງ | 63 | 343 | ຢູ່ໃນ |
| 24 | ບໍ່ແນງ | ບໍ່ໂພນຕື້ອ | ກະເລີງ | 284 | 1628 | ຢູ່ໃນ |
| 25 | ນາສາ | ບໍ່ໂພນຕື້ອ | ກະເລີງ | 33 | 180 | ຢູ່ໃນ |
| 26 | ວັງເຜີ້ງ | ບໍ່ໂພນຕື້ອ | ກະເລີງ | 40 | 223 | ຢູ່ໃນ |
| 27 | ທົ່ງຄາ | ບໍ່ໂພນຕື້ອ | ກະເລີງ | 77 | 462 | ຢູ່ໃນ |
| 28 | ໜອງຊົນ | ບໍ່ໂພນຕື້ອ | ກະເລີງ | 39 | 217 | ຢູ່ໃນ |
| 29 | ຜາແຫລມ | ບໍ່ໂພນຕື້ອ | ກະເລີງ | 37 | 213 | ຢູ່ໃນ |
| 30 | ຊາວ | ບໍ່ໂພນຕື້ອ | ກະເລີງ | 75 | 379 | ຢູ່ໃນ |
| 31 | ປາກທຶກ | ປາກທຶກ | ກະເລີງ | 195 | 980 | ທັບຊ້ອນ |
| 32 | ທ່າເດື່ອ | ປາກທຶກ | ກະເລີງ | 158 | 716 | ທັບຊ້ອນ |
| ລວມທັງໝົດ | | | | 3,090 | 17,267 | |

(ຫ້ອງການຄຸ້ມຄອງຊັບພະຍາກອນປ່າໄມ້ແຂວງຄຳມ່ວນ; ສູນສະຖິຕິແຫ່ງຊາດ, ການສາຫລວດພົນລະເມືອງແຫ່ງຊາດປີ 2015)

**ສະຖິຕິປະຊາກອນແລະຊົນເຜົ່າ ຂອງ 19 ບ້ານທີ່ເປັນຜູ້ຮັກສາປ່າສະຫງວນແຫ່ງຊາດພູຫີນປູນ ຢູ່ເມືອງ ຄູນຄຳ, ແຂວງ ຄຳມ່ວນ.**

| ລດ | ຊື່ບ້ານ | ກຸ່ມບ້ານ | ຊົນເຜົ່າ | ຈຳນວນ ຫລັງຄາ ເຮືອນ | ຈຳນວນຄົນ | ຈຸດທີ່ຕັ້ງ |
|---|---|---|---|---|---|---|
| 1 | ກອງລໍ່ | ກອງລໍ່ | ກະເລີງ | 209 | 1,339 | ຢູ່ໃນ |
| 2 | ອໍ້ | ກອງລໍ່ | ກະເລີງ | 58 | 381 | ຢູ່ໃນ |
| 3 | ກຸບ | ກອງລໍ່ | ກະເລີງ | 93 | 639 | ຢູ່ໃນ |
| 4 | ມ່ວງເໜືອ | ກອງລໍ່ | ກະເລີງ | 43 | 212 | ຢູ່ໃນ |
| 5 | ໂພນແຍງ | ກອງລໍ່ | ກະເລີງ | 67 | 376 | ຢູ່ໃນ |
| 6 | ນໍ້ານອນ | ກອງລໍ່ | ກະເລີງ | 55 | 309 | ຢູ່ໃນ |
| 7 | ແກ້ງ | ກອງລໍ່ | ກະເລີງ | 57 | 278 | ຢູ່ໃນ |
| 8 | ນາກາງ | ກອງລໍ່ | ກະເລີງ | 188 | 973 | ຢູ່ໃນ |
| 9 | ນາຄຳ | ກອງລໍ່ | ກະເລີງ | 73 | 351 | ຢູ່ໃນ |
| 10 | ນາຊ້າງຂ້າມ | ມ່ວງນໍ້າສາງ | ກະເລີງ | 149 | 637 | ຢູ່ໃນ |
| 11 | ນາເມືອງ | ມ່ວງນໍ້າສາງ | ກະເລີງ | 131 | 708 | ຢູ່ໃນ |
| 12 | ນາມະຮາງ | ມ່ວງນໍ້າສາງ | ກະເລີງ | 78 | 441 | ຢູ່ໃນ |
| 13 | ມ່ວງນໍ້າສາງ | ມ່ວງນໍ້າສາງ | ກະເລີງ | 240 | 847 | ຢູ່ໃນ |
| 14 | ຜາຄ້ອງ | ມ່ວງນໍ້າສາງ | ກະເລີງ | 86 | 410 | ຢູ່ໃນ |
| 15 | ໂພນທອງ | ມ່ວງນໍ້າສາງ | ກະເລີງ | 91 | 387 | ຢູ່ໃນ |
| 16 | ໜອງຮາງ | ມ່ວງນໍ້າສາງ | ກະເລີງ | 177 | 548 | ຢູ່ໃນ |
| 17 | ພູຊາດ | ຄູນຄຳ | ກະເລີງ | 418 | 2,070 | ຢູ່ໃນ |
| 18 | ຄູນເພັດ | ທ່ານາ | ກະເລີງ | 401 | 1,822 | ທັບຊ້ອນ |
| 19 | ຜາຊ້າງ | ທ່ານາ | ກະເລີງ | 390 | 1,953 | ທັບຊ້ອນ |
| ລວມທັງໝົດ | | | | **3,004** | **14,681** | |

(ຫ້ອງການຄຸ້ມຄອງຊັບພະຍາກອນປ່າໄມ້ແຂວງຄາມ່ວນ; ສູນສະຖິຕິແຫ່ງຊາດ, ການສາຫລວດພົນລະເມືອງແຫ່ງຊາດປີ 2015)

**ສະຖິຕິປະຊາກອນແລະຊົນເຜົ່າ ຂອງ 19 ບ້ານທີ່ເປັນຜູ້ຮັກສາປ່າສະຫງວນແຫ່ງຊາດພູຫີນປູນ ຢູ່ເມືອງມະຫາໄຊ, ແຂວງ ຄຳມ່ວນ.**

| ລດ | ຊື່ບ້ານ | ກຸ່ມບ້ານ | ຊົນເຜົ່າ | ຈຳນວນ ຫລັງຄາ ເຮືອນ | ຈຳນວນຄົນ | ຈຸດທີ່ຕັ້ງ |
|---|---|---|---|---|---|---|
| 1 | ເຫລົ່າ | ນາດູ່ | ມະກອງ | 135 | 696 | ທັບຊ້ອນ |
| 2 | ນາຄຳ | ນາດູ່ | ມະກອງ | 135 | 667 | ທັບຊ້ອນ |
| 3 | ນາດູ່ | ນາດູ່ | ມະກອງ | 44 | 226 | ທັບຊ້ອນ |
| 4 | ນາດີ | ນາດູ່ | ມະກອງ | 51 | 261 | ທັບຊ້ອນ |
| 5 | ແຕນ | ນາດູ່ | ມະກອງ | 147 | 685 | ທັບຊ້ອນ |
| 6 | ໂພນໄລ່ | ນາດູ່ນາດູ່ | ມະກອງ | 54 | 232 | ທັບຊ້ອນ |
| 7 | ກອນຄວາຍ | ນາດູ່ | ມະກອງ | 50 | 229 | ທັບຊ້ອນ |
| 8 | ນາຕຸງ | ນາດູ່ | ມະກອງ | 84 | 469 | ທັບຊ້ອນ |

| | | | | | | |
|---|---|---|---|---|---|---|
| 9 | ຫລັກ ໑ | ເອກະລາດ | ລາວ, ຜູ່ໄທ | 38 | 195 | ທັບຊ້ອນ |
| 10 | ນາກອກ | ເອກະລາດ | ລາວ,ມະກອງ | 189 | 1,023 | ທັບຊ້ອນ |
| 11 | ໂພນສະອາດ | | ຜູ່ໄທ,ລາວ,ມະກອງ | 526 | 2,857 | ທັບຊ້ອນ |
| ລວມທັງໝົດ | | | | **1,453** | **7,540** | |

(ຫ້ອງການຄຸ້ມຄອງຊັບພະຍາກອນປ່າໄມ້ແຂວງຄາມ່ວນ; ສູນສະຖິຕິແຫ່ງຊາດ, ການສາຫລວດພົນລະເມືອງແຫ່ງຊາດປີ 2015)

**ສະຖິຕິປະຊາກອນແລະຊົນເຜົ່າ ຂອງ 19 ບ້ານທີ່ເປັນຜູ້ຮັກສາປ່າສະຫງວນແຫ່ງຊາດພູຫີນປູນ ຢູ່ເມືອງ ນາກາຍ, ແຂວງ ຄໍາມ່ວນ.**

| ລດ | ຊື່ບ້ານ | ກຸ່ມບ້ານ | ຊົນເຜົ່າ | ຈໍານວນ ຫລັງຄາ ເຮືອນ | ຈໍານວນຄົນ | ຈຸດທີ່ຕັ້ງ |
|---|---|---|---|---|---|---|
| 1 | ທົ່ງ, ນາດ່ານ, ສີດາ | ເມືອງຫລວງ | ມະກອງ, ຍໍ້ | 280 | 1,520 | ຢູ່ນອກ |
| 2 | ຍາງ, ຊີ້ງ, ດອນແກ້ວ | ເມືອງຫລວງ | ແອະ, ມະກອງ | 302 | 1,374 | ທັບຊ້ອນ |
| 3 | 'ເມືອງຫຼວງ, ວັງຢ້ຽມ, ດົງໂພສີ,ໂພນຄໍ້ | ເມືອງຫລວງ | ຍໍ້ | 321 | 1,744 | ທັບຊ້ອນ |
| 4 | ກອນ, ວັງຫີນ, ກອນ3 | ເມືອງຫລວງ | ມະກອງ, ເມີຍ:ແອະ, ລາວລຸ່ມ | 132 | 775 | ທັບຊ້ອນ |
| 5 | ນາບອນ, ນາຫີນ | ນາຕານ | ຊໍາ,ເມີຍ | 64 | 378 | ທັບຊ້ອນ |
| 6 | ຜາດ່າງ | ນາຕານ | ມະກອງ | 79 | 414 | ທັບຊ້ອນ |
| 7 | ນາຫ້າງ, ທ່າຂັ້ນແກ້ວ, ນາເມືອງ, ໂພນບົກ | ນາຕານ | ຊໍາ, ແມນ | 171 | 1024 | ທັບຊ້ອນ |
| 8 | 'ນາຕານ, ໂພນຄໍາ | ນາຕານ | ຊໍາ, ແມນ | 92 | 598 | ທັບຊ້ອນ |
| ລວມທັງໝົດ | | | | **1,441** | **7,827** | |

(ຫ້ອງການຄຸ້ມຄອງຊັບພະຍາກອນປ່າໄມ້ແຂວງຄາມ່ວນ; ສູນສະຖິຕິແຫ່ງຊາດ, ການສາຫລວດພົນລະເມືອງແຫ່ງຊາດປີ 2015)

**ສະຖິຕິປະຊາກອນແລະຊົນເຜົ່າ ຂອງ 19 ບ້ານທີ່ເປັນຜູ້ຮັກສາປ່າສະຫງວນແຫ່ງຊາດພູຫີນປູນ ຢູ່ເມືອງ ຍົມມະລາດ, ແຂວງ ຄໍາມ່ວນ.**

| ລດ | ຊື່ບ້ານ | ກຸ່ມບ້ານ | ຊົນເຜົ່າ | ຈໍານວນ ຫລັງຄາ ເຮືອນ | ຈໍານວນຄົນ | ຈຸດທີ່ຕັ້ງ |
|---|---|---|---|---|---|---|
| 1 | ພົດສີໄຄ | ເອກະລາດ | ກະເລີງ | 117 | 543 | ທັບຊ້ອນ |
| 2 | ໂພນສັງ | ເອກະລາດ | ບລູ | 80 | 434 | ທັບຊ້ອນ |
| 3 | ຕາດ | ເອກະລາດ | ຈະລວຍ | 222 | 1094 | ຢູ່ໃນ |
| 4 | ຫລວງ | ວຽງຫລວງ | ກະເລີງ | 175 | 859 | ຢູ່ໃນ |
| 5 | ປອມຄຸມ | ວຽງຫລວງ | ກະເລີງ | 158 | 705 | ຢູ່ໃນ |
| 6 | ໂພນໝາດ | ວຽງຫລວງ | ມະກອງ | 115 | 623 | ຢູ່ໃນ |
| 7 | ໂພນສີ | ວຽງຫລວງ | ມະກອງ | 127 | 685 | ຢູ່ໃນ |
| 8 | ກອນພັນ | ເອກະລາດ | ຈະລວຍ | 270 | 1,190 | ທັບຊ້ອນ |
| 9 | ຜາທຸງ | ເອກະລາດ | ແຊກ | 116 | 604 | ທັບຊ້ອນ |
| 10 | ຍົມມະລາດໃຕ້ | ເອກະລາດ | ມະກອງ | 180 | 881 | ທັບຊ້ອນ |
| 11 | ຖໍ້າພວງ | ເອກະລາດ | ກະເລີງ | 167 | 778 | ທັບຊ້ອນ |

| | | | | | | |
|---|---|---|---|---|---|---|
| 12 | ສ້າງແກ້ວ | ເອກະລາດ | ມະກອງ | 261 | 1263 | ທັບຊ້ອນ |
| 13 | ເຫລົ່າ | ເອກະລາດ | ມະກອງ | 156 | 683 | ທັບຊ້ອນ |
| 14 | ທ່າໂທດ | ເອກະລາດ | ມະກອງ | 113 | 978 | ທັບຊ້ອນ |
| 15 | ນາລາດຄວາຍ | ເອກະລາດ | ມະກອງ | 166 | 821 | ທັບຊ້ອນ |
| 16 | ໂຄກສະຫວ່າງ | ເອກະລາດ | ມະກອງ | 104 | 592 | ທັບຊ້ອນ |
| ລວມທັງໝົດ | | | | **2,527** | **12,733** | ທັບຊ້ອນ |

(ຫ້ອງການຄຸ້ມຄອງຊັບພະຍາກອນປ່າໄມ້ແຂວງຄາມ່ວນ; ສູນສະຖິຕິແຫ່ງຊາດ, ການສາຫລວດພົນລະເມືອງແຫ່ງຊາດປີ 2015)

**ສະຖິຕິປະຊາກອນແລະຊົນເຜົ່າ ຂອງ 19 ບ້ານທີ່ເປັນຜູ້ຮັກສາປ່າສະຫງວນແຫ່ງຊາດພູຫີນປູນ ຢູ່ເມືອງ ທ່າແຂກ, ແຂວງ ຄໍາມ່ວນ.**

| ລດ | ຊື່ບ້ານ | ກຸ່ມບ້ານ | ຊົນເຜົ່າ | ຈໍານວນ ຫລັງຄາ ເຮືອນ | ຈໍານວນຄົນ | ຈຸດທີ່ຕັ້ງ |
|---|---|---|---|---|---|---|
| 1 | 'ຜາແຫຼມ | ບ້ານຖ້ໍາ-ນາເສ | ກະເລີງ | 81 | 435 | ຢູ່ໃນ |
| 2 | ດ່ອຍ | ບ້ານຖ້ໍາ-ນາເສ | ກະເລີງ | 78 | 478 | ຢູ່ໃນ |
| 3 | ນາໂພນດູ່ | ບ້ານຖ້ໍາ-ນາເສ | ກະເລີງ | 97 | 506 | ຢູ່ໃນ |
| 4 | ນາເສ | ບ້ານຖ້ໍາ-ນາເສ | ກະເລີງ | 80 | 431 | ຢູ່ໃນ |
| 5 | ນາຂ້າງຊ້າງ | ບ້ານຖ້ໍາ-ນາເສ | ກະເລີງ | 128 | 724 | ທັບຊ້ອນ |
| 6 | ທອກນາຍໍ | ບ້ານຖ້ໍາ-ນາເສ | ແຊກ | 83 | 475 | ທັບຊ້ອນ |
| 7 | ກອນຜາວັງ | ບ້ານຖ້ໍາ-ນາເສ | ກະເລີງ, ມະກອງ | 91 | 490 | ທັບຊ້ອນ |
| 8 | ພົນ | ບ້ານຖ້ໍາ-ນາເສ | ກະເລີງ, ມະກອງ | 109 | 529 | ທັບຊ້ອນ |
| 9 | ກົກຕ້ອງ | ນາມ່ວງ-ນາແງວ | ກະເລີງ | 165 | 957 | ຢູ່ນອກ |
| 10 | ສະໂງມ | ນາມ່ວງ-ນາແງວ | ກະເລີງ | 146 | 703 | ຢູ່ນອກ |
| 11 | 'ນາໄກ່ເກ່ຍ | ນາມ່ວງ-ນາແງວ | ກະເລີງ | 189 | 1067 | ຢູ່ນອກ |
| ລວມທັງໝົດ | | | | **1,247** | **6,795** | |

(ຫ້ອງການຄຸ້ມຄອງຊັບພະຍາກອນປ່າໄມ້ແຂວງຄາມ່ວນ; ສູນສະຖິຕິແຫ່ງຊາດ, ການສາຫລວດພົນລະເມືອງແຫ່ງຊາດປີ 2015)

## ໂຄງປະກອບທາງດ້ານຊົນເຜົ່າ

ຊົນເຜົ່າ ຢູ່ເມືອງຫີນບູນ (30 ບ້ານ ໃນຈໍານວນ 32 ບ້ານ) ແລະ ເມືອງຄູນຄໍາ (ທັງໝົດ 19 ບ້ານ) ເກືອບວ່າແມ່ນເຜົ່າບໍ້, ເຜົ່າກະເລີງ, ຫລື ໂບ/ກະເລີງ ທັງໝົດ, ນອກຈາກສອງບ້ານ ຢູ່ເມືອງຫີນບູນ ຊຶ່ງແມ່ນເຜົ່າພູ່ໄທນ້ອຍ. 11 ບ້ານ ຢູ່ເມືອງທ່າແຂກ ສ່ວນໃຫຍ່ ແມ່ນເຜົ່າກະເລີງ (7 ບ້ານ), ຊຶ່ງມີບາງເຜົ່າມະກອງຈໍານວນໜຶ່ງ; ແລະ ມີບ້ານແຊກ ບ້ານດຽວ. ຢູ່ເມືອງຍົມມະລາດ, ບ້ານຕ່າງໆ ສ່ວນໃຫຍ່ແມ່ນເຜົ່າມະກອງ (9 ບ້ານ), ມີເຜົ່າລາວເລັກນ້ອຍ(5 ບ້ານ); ບ້ານທີ່ມີເຜົ່າຄ້າຍຄືກັນນີ້ ແມ່ນຢູ່ເມືອງ ມະຫາໄຊ, ຊຶ່ງມີ 8 ບ້ານ ໃນຈໍານວນ 11 ບ້ານ ທີ່ເປັນເຜົ່າມະກອງ, ແລະ ສ່ວນສາມບ້ານທີ່ເຫລືອ ແມ່ນບ້ານປະສົມ ມີເຜົ່າລາວ, ມະກອງ ແລະ ພູ່ໄທ. ຊົນເຜົ່າຢູ່ພາຍໃນ  8 ບ້ານ ຢູ່ໃນເມືອງນາກາຍ ແມ່ນມີຄວາມຫລາກຫລາຍ, ປະກອບໄປດ້ວຍ ສີ່ເຜົ່າປະສົມກັນ ມີເຜົ່າແມ່ນ ກັບ ເຜົ່າຊໍາ; ລວມທັງມີສີ່ເຜົ່າປະສົມຄື ເຜົ່າແອະ, ລາວ,ມະກອງ ແລະ ຍໍ້.

## ການນໍາໃຊ້ຊັບພະຍາກອນທ້ອງຖິ່ນທີ່ສໍາຄັນ

ເຜົ່າທີ່ນອນຢູ່ໃນກຸ່ມລາວ-ໄຕ ເຊັ່ນ: ລາວ, ພູ່ໄທ, ກະເລີງ, ບໍ້,ແຊກ, ຊໍາ ແລະ ອື່ນໆ, ປົກກະຕິແມ່ນເຮັດນາປູກເຂົ້ານາປີ. ຢູ່ເກືອບທຸກພື້ນທີ່ ເຜົ່ານີ້ ຈະສາມາດເຂົ້າພາສາລາວ ແລະ ການສຶກສາ, ສາທາລະນະສຸກໄດ້ງ່າຍ. ກຸ່ມມອນ-ຂະແມ ເຊັ່ນ:

ເຜົ່າບລູ(ມະກອງ) ຢູ່ເຂດພູຫີນປູນ, ກໍທຳການຜະລິດນາປີເຊັ່ນກັນ, ຍົກເວັ້ນສະເພາະກຸ່ມທີ່ພົບເຫັນຢູ່ຕາມພູພຽງນາກາຍ ທີ່ອາໄສ (ຂຶ້ນກັບຈຸດທີ່ຕັ້ງຂອງບ້ານ) ການເຮັດໄຮ່ເລື່ອນລອຍ. ຍ້ອນວ່າພາສາແຕກຕ່າງກັນ ພວກເຂົາມັກຈະພົບຄວາມຫຍຸ້ງຍາກໃນການເຂົ້າເຖິງການຮັກສາສຸຂະພາບ ແລະ ການສຶກສາ(ອີກເທື່ອໜຶ່ງ ທັງນີ້ ກໍຍ້ອນຈຸດທີ່ຕັ້ງຂອງບ້ານ ແລະ ຄວາມສາມາດດ້ານພາສາລາວ). ນອກຈາກເຂົ້າແລ້ວ, ກໍມີພືດພັກຫລາຍຊະນິດ, ພືດປະເພດໝາກບອບ ແລະ ພືດທີ່ເປັນຫົວຕ່າງໆກໍສາມາດເຕີບໂຕຢູ່ໃນພື້ນທີ່ນີ້ໄດ້ດີ. ຢູ່ບາງພື້ນທີ່ຂອງເມືອງຫີນບູນ ກໍໄດ້ເຂົ້າຮ່ວມໃນການປູກຕົ້ນໄມ້ອີກ ທີ່ບໍລິສັດໂອຈີ ໃຫ້ການສົ່ງເສີມ. ໃນການປູກໄມ້ດັ່ງກ່າວ ເຫັນໄດ້ວ່າບໍ່ປະສົບຜົນສຳເລັດ. ເນື່ອງຈາກວ່າ ທຸກເຜົ່າ ທັງເຜົ່າລາວ-ໄຕ ແລະ ມອນ-ຂະແມ ແມ່ນດຳລົງຊີວິດຢູ່ໃກ້ກັບເຂດແຫລ່ງນ້ຳ, ການຫາປາ ກໍເປັນແຫລ່ງອາຫານທີ່ສຳຄັນ ໄປຄຽງຄູ່ກັບເຄື່ອງປ່າຂອງດົງອື່ນໆ. ຫວ່າງບໍ່ດົນມານີ້ ມີການຂະຫຍາຍຕົວ ຂອງການປູກພືດເສດຖະກິດ, ການຈ້າງແຮງງານ, ປົກກະຕິຈະແມ່ນຜູ້ຊາຍເຮັດ, ແລະ ການເຮັດວຽກຢູ່ປະເທດໄທ, ທັງເພດຍິງ ແລະ ເພດຊາຍ ແມ່ນກາຍເປັນເລື່ອງທຳມະດາ.

## ຄຸນຄ່າທາງດ້ານການທ່ອງທ່ຽວ

ຜ່ານມາພື້ນທີ່ນີ້ ມີນັກທ່ອງທ່ຽວເຂົ້າມາຫລາຍ, ຕົ້ນຕໍແມ່ນເຂົ້າມາເບິ່ງຖ້ຳກອງລໍ່, ແລະ ກໍມີທ່າແຮງຫລາຍ ທີ່ຈະພັດທະນາແຫລ່ງທ່ອງທ່ຽວທຳມະຊາດ. ບ່ອນນີ້ ຕັ້ງຢູ່ແລວທາງຮອບວຽນ(The Loop) ທີ່ເປັນເສັ້ນທາງນິຍົມຂີ່ລົດຈັກ ຊຶ່ງນັກທ່ອງທ່ຽວ ຈະແລ່ນຕາມໄປຕາມແຂວງ ຄຳມ່ວນ ແລະ ແຂວງ ບໍລິຄຳໄຊ ແລະ ມີການເຊື່ອມໂຍງກັບ ຈຸດດຶງດູດການທ່ອງທ່ຽວຫລາຍແຫ່ງ. ບ່ອນທີ່ດຶງດູດການທ່ອງຫລາຍຫລາຍແຫ່ງ ຕັ້ງຢູ່ຕາມເສັ້ນທາງຮອບວຽນ ຢູ່ໃນເຂດປ່າສະຫງວນແຫ່ງຊາດ ພູຫີນປູນ.

**ຖ້ຳກອງລໍ່:** ຖ້ຳມະຫັດສະຈັນແຫ່ງນີ້ ເປັນຖ້ຳຫີນປູນຍາວ 7.5 ກມ ກໍການົດຈາກສາຍນາ້ຫີນບູນ ທີ່ໄຫລທະລຸຜ່ານ ຖ້ຳຕະຫລອດປີ. ມີເຮືອແລ່ນຜ່ານຖ້ຳໃຫຍ່, ທີ່ກວ້າງ 90 ແມັດ ແລະ ສູງ 100 ແມັດ. ຕາມການຄາດຄະເນ ຖ້ຳນີ້ມີນັກທ່ອງທ່ຽວມາທ່ຽວ 25,000 ຄົນ(18,000 – 20,000 ຄົນ ແມ່ນນັກທ່ອງທ່ຽວຕ່າງປະເທດ ແລະ 4,000 – 5,000 ຄົນ ແມ່ນນັກທ່ອງທ່ຽວພາຍໃນ) ໃນປີ 2015 ແລະ ກໍເປັນການອຸດໜູນ ສະມາຄົມບໍລິການເຮືອ, ເຮືອນພັກແຮມກັບປະຊາຊົນ ແລະ ເຮືອນພັກຕ່າງໆ ຢູ່ບ້ານກອງລໍ່, ຊຶ່ງນີ້ ເປັນຕົວຢ່າງທີ່ດີທີ່ສຸດແຫ່ງໜຶ່ງ ຂອງການທ່ອງທ່ຽວທີ່ປະຊາຊົນມີສ່ວນຮ່ວມ ຢູ່ໃນປະເທດ. ນັກທ່ອງທ່ຽວສາມາດຂີ່ເຮືອ ຜ່ານທະລຸຖ້ຳໄດ້, ຢຸດແວ່ຊົມ ຫີນຍ້ອຍທີ່ສວຍງາມ ແລະ ກ້ອນຫີນຕ່າງໆ ຢູ່ພາຍໃນໂຖງໃຫຍ່ຂອງຖ້ຳ, ແລະ ກໍສາມາດພັກແຮມຢູ່ເຮືອນພັກແຮມກັບປະຊາຊົນ ຢູ່ອີກດ້ານໜຶ່ງຂອງຖ້ຳ ຢູ່ບ້ານນາຕານ.

ນາຫີນ ເປັນບ່ອນໜຶ່ງທີ່ດີສຸດ ໃນການເບິ່ງນົກຊະນິດ ຊຶ່ງຫາກໍຄົ້ນພົບໃໝ່ ໃນເຂດພູຫີນປູນຂອງອິນໂດຈີນ, ມີນົກປຼອດໜ້າກ້ຽວ/ນົກຫົວລ້ານ( Bare-faced Bulbul)ແລະ ນົກກິນແມງໄມ້ຫົວສີດ້ຳ (the Sooty babbler). ຈຸດຊົມວິວຢູ່ດ້ານໃຕ້ຂອງຕົວເມືອງ ກໍເປັນຈຸດທີ່ຕັ້ງໜຶ່ງທີ່ດີສຸດ ເພື່ອສັງເກດເບິ່ງ ຄ່າງລາວ ສະເພາະຖິ່ນ ຢູ່ສະເພາະແມ່ນໃນຕອນເຊົ້າຕູ່. ພື້ນທີ່ນີ້ ຍັງເປັນທີ່ຮັບຮູ້ວ່າມີປະຊາກອນຊ້າງຫລາຍ. ຢູ່ເຂດທ່າຫີນ ມີຕາດນ້ຳຊະນຳ ແລະ ຕາດມ່ວງ ຊຶ່ງສາມາດເຂົ້າເຖິງໄດ້ຈາກທາງບ້ານ ຄູນຄຳ ທາງໄປກອງລໍ່. ນຳ້ຕົກຕາດດັ່ງກ່າວ ຜ່ານມາມີແຂກມາທ່ຽວໜ້ອຍກວ່າ 3,000 ຄົນ ຕໍ່ປີ.

ການຍ່າງທ່ຽວປ່າເຂດຜາແຫລມ ໄລຍະສອງວັນ ຜ່ານໃຈກາງເຂດປ່າສະຫງວນແຫ່ງຊາດ ພູຫີນປູນ ໄປຫາຖ້ຳຕ່າງໆ ແລະ ບ້ານຢູ່ເຂດຊົນນະບົດ. ທິວທັດພູຫີນປູນ ເຮັດໃຫ້ເກີດມີໜອງນ້ຳ ລົມມໍລະສຸມທີ່ມີຄວາມບໍລິສຸດ ແລະ ມີຖ້ຳທີ່ໜ້າປະທັບໃຈ.

ຈຸດດຶງດູດການທ່ອງທ່ຽວທີ່ຢູ່ກັບກັບເມືອງທ່າແຂກຫລາຍທີ່ສຸດ ແມ່ນຂຸນກອງແລງ, ຊຶ່ງແມ່ນບຶງຂະໜາດໃຫຍ່ ສີຟ້າໃສ ອ້ອມຮອບໄປດ້ວຍ ພູຫີນປູນ. ບຶງແຫ່ງນີ້ ມີນັກທ່ອງທ່ຽວ ມາຢ້ຽມຢາມ ປະມານ 10,000 ຄົນຕໍ່ປີ.

ໜອງປາຝາ(ຖ້ຳພະ) ແມ່ນສະຖານທີ່ທາງສາດສະໜາແຫ່ງໜຶ່ງ ທີ່ສຳຄັນທີ່ສຸດ ຢູ່ແຂວງ ຄຳມ່ວນ, ຖ້ຳດັ່ງກ່າວປະກອບມີ ພະພຸດທະຮູບບູຮານຫລາຍກວ່າ 200 ອົງ ທີ່ຖືກປ່ອຍໃຫ້ລືມ ມາແລ້ວຫລາຍຮ້ອຍປີ. ຖ້ຳນີ້ ມີແຂກມາທ່ຽວ 20,000 – 30,000 ຄົນຕໍ່ປີ.

ມີເຂດຍ່າງທ່ຽວປ່າທີ່ມີຊື່ສຽງ ຊຶ່ງຕິດພັນກັບ ການຍຸດລອຍນ້ຳທີ່ຊຸ່ມຊື່ນ ຢູ່ໜອງເຕົ່າ ແລະ ຖ້ຳໜອງປາເຊື່ອມ.

## ການກຳນົດເຂດ ແລະ ແຜນການຄຸ້ມຄອງ

ແຜນຄຸ້ມຄອງຈັດສັນ ເຂດປ່າສະຫງວນແຫ່ງຊາດ ພູຫີນປູນ ໄດ້ຂຽນໃນປີ 2000. ແນວໃດກໍຕາມ ເນື້ອຫາຍັງມີຄຸນນະພາບຕ່ຳ. ການແບ່ງກຳນົດເຂດ ຂອງປ່າສະຫງວນ ຍັງບໍ່ທັນໄດ້ປະຕິບັດ, ເຖິງແມ່ນວ່າ ໄດ້ຄາດການວ່າ ພື້ນທີ່ສ່ວນໃຫຍ່ ຂອງປ່າສະຫງວນ ຈະກາຍເປັນເຂດຫວງຫ້າມເດັດຂາດ ຍ້ອນການເຂົ້າເຖິງໄດ້ຍາກ.

## ການປະກອບສ່ວນທີ່ສຳຄັນ ຕໍ່ລະບົບປ່າສະຫງວນ

### ຄຸນຄ່າດ້ານຊີວະນາໆພັນ

ປ່າສະຫງວນແຫ່ງຊາດພູຫີນປູນ ມີຄວາມພິເສດທາງດ້ານຊີວະພູມສາດທີ່ແຕກຕ່າງຈາກ ເຂດປ່າສະຫງວນແຫ່ງຊາດອື່ນໆ. ມັນເປັນໜຶ່ງ ໃນຈຳນວນປ່າສະຫງວນສອງແຫ່ງທີ່ຕັ້ງຢູ່ເຂດໃຈກາງພູຫີນປູນອິນໂດຈີນ, ແລະ ປົກປັກຮັກສາ ຕົວຢ່າງທີ່ເປັນຕົວແທນ ຂອງ ເຂດພູມສັນຖານແລ້ງ ດ້ານທິດຕາເວັນຕົກ. ມັນມີຄວາມສຳຄັນລະດັບໂລກ ສຳລັບ ຄ່າງລາວ ແລະ ມີປະຊາກອນລີງອາຊາມ ທີ່ສຳຄັນລະດັບຊາດ ແລະ ທະນີແກ້ມຂາວ. ນອກຈາກນີ້ ພູຫີນປູນ ຍັງເປັນສ່ວນໜຶ່ງຂອງ ຂອບເຂດການທ່ຽວໄປມາຂອງກວ້າງໃຫຍ່ທີ່ສຸດ ຂອງປະຊາກອນຊ້າງປ່າທີ່ສຳຄັນຂອງອາຊີ, ແລະ ເມີຍ. ນອກຈາກນັ້ນ, ພູຫີນປູນຍັງມີ ປະຊາກອນມີ ແລະ ເຍືອງທີ່ມີຄວາມສຳຄັນລະດັບຊາດ ແລະມີເຈຍຢ່າງໜ້ອຍ 43 ຊະນິດ (ມີເຈຍຂະໜາດໃຫຍ່ຫລາກຫລາຍຊະນິດ ກວ່າປ່າສະຫງວນແຫ່ງຊາດແຫ່ງອື່ນໆ).

ນົກຫົວລ້ານ(The bare-faced bulbul *Pycnonotus hualon*) ກໍແມ່ນນົກໃນຕະກຸນ ນົກປູອດ(bulbul) ຊຶ່ງເປັນນົກທີ່ຖືກກ່າວເຖິງໃໝ່ໆ ຢູ່ໃນເຂດພູຫີນປູນຂອງອິນໂດຈີນ ໃນປີ 2009. ພູຫີນປູນ ຍັງມີ ນົກທ້ອງຖິ່ນ ເຊັ່ນ ນົກກິນແມງໄມ້ຫົວສີດ້ຳ (the Sooty babbler). ມີນົກຊະນິດໃໝ່ - Limestone Leaf Warbler ກໍມີຢູ່ໃນເຂດນີ້.

ເຂດປ່າສະຫງວນແຫ່ງຊາດພູຫີນປູນ ຍັງມີເຕົ່າຢ່າງໜ້ອຍ 14 ຊະນິດ ແລະ ສັດເລືອຄານຊະນິດສຳຄັນຕໍ່ການອະນຸລັກໃນລະດັບຊາດ.

### ຄຸນຄ່າທາງດ້ານແຫລ່ງນ້ຳ

ເປັນບ່ອນປ້ອງກັນອ່າງໂຕ່ງ ໃຫ້ຫລາຍສ່ວນຂອງ ນ້ຳຫີນບູນ, ນ້ຳປະກັນ, ແລະ ນ້ຳດອນ, ແລະ ນ້ຳປະປາເມືອງທ່າແຂກ. ອ່າງໂຕ່ງຕອນເທິງ ຂອງສາຍນ້ຳເຫລົ່ານີ້ ເປັນນ້ຳສີຫີນປູນທີ່ມີຄວາມໂດດເດັ່ນ.

**ຄຸນຄ່າທາງດ້ານວັດທະນະທຳ**

ມີວັດ ແລະ ທຳບູຊາຫລາຍແຫ່ງ ຢູ່ຕາມຖ້ຳຫີນປູນ ແລະ ປ່າສັກສິດຫລາຍແຫ່ງ ຢູ່ໃນພື້ນທີ່. ຢູ່ບ້ານນາ ມີຊາກເມືອງເກົ່າຫລາຍບ່ອນ ຊຶ່ງເອີ້ນກັນວ່າ ອາລັນ ກວມເອົາເນື້ອທີ່ຫລາຍກວ່າ 20 ເຮັກຕາ, ລວມທັງຊາກຫລົງເຫລືອ ຂອງອາຄານດິນຈີ່ຫລາຍຫລັງ. ບ້ານ ນາຄູ້ ມີຮ່ອງຮອຍສິ່ງຫລົງເຫລືອຂອງພະທາດ ທີ່ເຮັດດ້ວຍດິນຈີ່ ອາຍຸປະມານ 300-400 ປີ.

ນອກຈາກນັ້ນ ຍັງມີສະຖານທີ່ທາງບູຮານ ທີ່ມີເຄື່ອງປັ້ນດິນເຜົາ ລວມທັງເຂດສົ່ງຄາມອິນໂດຈີນ ແລະ ເສັ້ນທາງຂອງສົງຄາມອິນໂດຈີນ.

**ບ່ອນຕິດຕໍ່ພົວພັນ**

ທ່ານ ສົມລໍ ວົງລຳພັນ (ຫົວໜ້າປ່າສະຫງວນແຫ່ງຊາດ), ໂທລະສັບ/ແຟກ: 051 212 755

## ບົດລາຍງານ ແລະ ເອກະສານອ້າງອີງ


Anon. 1998. Rapid and Participatory Biodiversity Assessments (BIORAP) in National Biodiversity Conservation Area, Khammouane Province, Lao PDR. Vol. 1 – Final Report. WWF Thailand/ Burapa Consultants, Bangkok.

Anon. 1998. Rapid and Participatory Biodiversity Assessments (BIORAP) in Khammouane Limestone National Biodiversity Conservation Area, Khammouane Province, Lao PDR. Vol. 2 – Consultants Report. WWF Thailand/ Burapa Consultants, Bangkok.

Claridge, G. F. and Bouaphanh Phanthavong. 1996. Community Relationships with the Khammouane Limestone NBCA, Lao PDR: Results of a Reconnaissance survey in nine villages. Global Environment Trust Fund Wildlife and Protected Areas Conservation Program in Lao PDR, Midas Agronomics Pty. Ltd., Vientiane.

Claridge, G. F, Nooren, H. and Sorangkhoun, T. 1998. An Assessment of Ecotourism Potential and Issues in the Northern Khammouane Limestone National Biodiversity Conservation Area. Lao GEF Biodiversity Conservation Project.

Claridge, G. F. 1999. Phou Hin Poun National Biodiversity Conservation Area Interim Management Plan – Working Draft Version.

Francis, C. M. and Vongkhamheng, C. 1998. Report on a survey of bats in Khammouan Limestone NBCA. Wildlife Conservation Society, Vientiane.

Gregory, A., Openshaw, S., Senior, K. and Papard, P. (n.d.). Report Following the 1996 Lao PDR Caves Project to Vientiane and Khammouane Provinces. LPDR Caves Project. Unpublished Report.

Jenkins, P.D., William Kilpatrick, C., Robinson, M.F., and Timmins, R.J. 2005. Morphological and molecular investigations of a new family, genus and species of rodent (Mammalia: Rodentia: Hystricognatha) from Lao PDR. *Systematics and Biodiversity* **2** (4): 419–454.

Musser, G.G., Smith A.L. Robinson M.F. and Lunde D.P. 2005. Description of a New Genus and Species of Rodent (Murinae, Muridae, Rodentia) from the Khammouan Limestone National Biodiversity Conservation Area in Lao PDR. *Novitates*, American Museum. No. 3497. 31 pp.

Phiapalath, P. 2010. Brief Report of Lao Langur *Trachypithecus laotum* Survey Phou Hin Poun National Protected Area, Khammouane Province. Lao Wildlife Conservation Association (Lao WCA), Vientiane, Lao PDR.

Phiapalath, P., Bousa A. and Paul Insua-Cao, P. 2013. The Status and Distribution of Gibbons in Phou Hin Poun National Protected Area, Khammouane Province. Fauna & Flora International/ IUCN Lao PDR, Vientiane, Lao PDR.

Robinson, M.F. Jenkins, P.D., Francis, C.M. and Fulford, A.J.C. 2003. A new species of the *Hipposideros pratti* group (Chiroptera, Hipposideridae) from Lao PDR and Vietnam. *Acta Chiropterologica*, 5(1): 31–48.

Robinson, M.F. and Webber, M. 2000. Survey of Bats (Mammalia: Chiroptera) in the Khammouan Limestone National Biodiversity Conservation Area, Lao PDR. *Nat. Hist. Bull. Siam Soc.* 48: 21-45, 21-45.

Steinmetz, R. (1998). A survey of habitats and mammals in and around Khammouane Limestone National Biodiversity Conservation Area, Lao PDR. WWF Thailand Project Office (draft).

Timmins, R. J. (ed). (1997). Notes on Wildlife and Habitats in Khammouan Province, Lao PDR – from visits between 1994 and 1996. Wildlife Conservation Society, Vientiane.

Woxvold, I.A., Duckworth J.W. and Timmins, R.J. 2009. An unusual new bulbul (Passeriformes: Pycnonotidae) from the limestone karst of Lao PDR. *Forktail.* 25: 1–12.